ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

## ກະຊວງໂຍທາທິການ ແລະ ຂົນສົ່ງ

## ໂຄງການຄຸ້ມຄອງຄວາມສ່ຽງໄພພິບັດຢູ່ອາຊີຕາເວັນອອກສ່ຽງໃຕ້ ໄລຍະ II ປະຈໍາ ສປປ ລາວ (SEADRM II)

# ແຜນການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ

(ທັນວາ 16, 2025)

ກະກຽມໂດຍ:

ກົມທາງນໍ້າ ແລະ ສະຖາບັນໂຍທາທິການ ແລະ ຂົນສົ່ງ

# ບົດສັດຫຍໍ້

## ພາບລວມ

ແຜນການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ (Stakeholder Engagement Plan - SEP) ສະບັບນີ້ ໄດ້ຖືກຈັດທຳຂຶ້ນໂດຍ ກົມທາງນ້ຳ (ກະຊວງໂຍທາທິການ ແລະ ຂົນສົ່ງ) ແລະ ສະຖາບັນໂຍທາທິການ ແລະ ຂົນສົ່ງ (PTI) ສຳລັບ ໂຄງການຄຸ້ມຄອງຄວາມສ່ຽງໄພພິບັດຢູ່ອາຊີຕາເວັນອອກສ່ຽງໃຕ້ ໄລຍະ II ປະຈຳ ສປປ ລາວ (SEADRM II, P510690). ແຜນ SEP ຈະຖືກນຳໃຊ້ເຂົ້າໃນທຸກການລົງທຶນພາຍໃຕ້ໂຄງການ SEADRM II ເຊິ່ງໄດ້ຮັບທຶນສະໜັບສະໜູນຈາກ ທະນາຄານໂລກ (WB) ແລະ ລັດຖະບານ ແຫ່ງ ສປປ ລາວ. ແຜນ SEP ຖືກກະກຽມຂຶ້ນໃຫ້ສອດຄ່ອງກັບ ກອບວຽກງານສິ່ງແວດລ້ອມ ແລະ ສັງຄົມ (ESF) ຂອງທະນາຄານໂລກ. ທັງນີ້, SEP ແມ່ນເອກະສານທີ່ມີການປັບປຸງຢ່າງຕໍ່ເນື່ອງ ແລະ ສາມາດປ່ຽນແປງໄດ້ຕາມຄວາມເໝາະສົມກັບຂອບເຂດວຽກງານຂອງໂຄງການໃນແຕ່ລະໄລຍະ.

## ແຜນການມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງ

ແຜນ SEP ມີຈຸດປະສົງເພື່ອຮັບປະກັນວ່າ ຊຸມຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ ລວມທັງຜູ້ມີສ່ວນທີ່ກ່ຽວຂ້ອງອື່ນໆ ທີ່ຈະໄດ້ຮັບຂໍ້ມູນຂ່າວສານ ແລະ ມີສ່ວນຮ່ວມໃນທຸກຂັ້ນຕອນຂອງການວາງແຜນ ແລະ ການຈັດຕັ້ງປະຕິບັດໂຄງການ. ໂຄງການໄດ້ໃຫ້ຄວາມສຳຄັນຕໍ່ກັບການຮັບຟັງຄຳຄິດເຫັນທີ່ເປັນຕົວແທນ ແລະ ກວມເອົາທຸກພາກສ່ວນ, ພ້ອມທັງສົ່ງເສີມບົດບາດຂອງແມ່ຍິງ ແລະ ກຸ່ມຄົນທີ່ບອບບາງ ໃນການວາງແຜນ ແລະ ຈັດຕັ້ງປະຕິບັດ. ນອກຈາກນີ້, ໂຄງການຍັງເນັ້ນໜັກເຖິງຄວາມສຳຄັນໃນການປຶກສາຫາລືກັບຜູ້ທີ່ໄດ້ຮັບຜົນກະທົບ ກ່ຽວກັບມາດຕະການຫຼຸດຜ່ອນຜົນກະທົບ ແລະ ການຕິດຕາມກວດກາການເຄື່ອນໄຫວຂອງໂຄງການຢ່າງຕໍ່ເນື່ອງ.

ແຜນ SEP ໄດ້ກຳນົດຜູ້ມີສ່ວນກ່ຽວຂ້ອງທີ່ອາດຈະໄດ້ຮັບຜົນກະທົບ, ລວມທັງຜູ້ທີ່ໄດ້ຮັບຜົນກະທົບໂດຍກົງ (ທັງດ້ານບວກ ແລະ ດ້ານລົບ) ແລະ ຜູ້ທີ່ມີຄວາມສົນໃຈຕໍ່ໂຄງການ. SEP ໄດ້ລະບຸເຖິງລັກສະນະຂອງຜົນກະທົບ, ອິດທິພົນ ແລະ ຄວາມສົນໃຈຂອງຜູ້ມີສ່ວນທີ່ກ່ຽວຂ້ອງ, ພ້ອມທັງກຳນົດວິທີການ ແລະ ກອບເວລາໃນການສ້າງການມີສ່ວນຮ່ວມຂອງພວກເຂົາເຂົ້າໃນການວາງແຜນ ແລະ ຈັດຕັ້ງປະຕິບັດໂຄງການ.

ນອກຈາກນັ້ນ, SEP ຍັງໄດ້ອະທິບາຍເຖິງປະເພດຂອງຂໍ້ມູນທີ່ຈະຕ້ອງໄດ້ເຜີຍແຜ່, ຄາດຄະເນກອບເວລາຂອງກິດຈະກຳການປຶກສາຫາລື, ວິທີການຮັບຟັງຄຳຄິດເຫັນຂອງຜູ້ມີສ່ວນໄດ້ສ່ວນເສຍ ແລະ ຂະບວນການແກ້ໄຂຄຳຮ້ອງທຸກ.

## ແຜນງານການມີສ່ວນຮ່ວມຂອງຜູ້ມີສ່ວນທີ່ກ່ຽວຂ້ອງ

ຈຸດປະສົງຫຼັກຂອງແຜນງານການມີສ່ວນຮ່ວມແມ່ນເພື່ອຮັບປະກັນວ່າ ຜູ້ມີສ່ວນໄດ້ສ່ວນເສຍທີ່ກ່ຽວຂ້ອງມີສ່ວນຮ່ວມກັບໂຄງການ ແລະ ເຂົ້າຮ່ວມຢ່າງເຕັມສ່ວນໃນການປະຊຸມປຶກສາຫາລື ທັງໃນໄລຍະວາງແຜນ ແລະ ຈັດຕັ້ງປະຕິບັດ. ໂຄງການຈະປຶກສາຫາລືກັບພາກສ່ວນຕ່າງໆ ໃນແຕ່ລະໄລຍະຂອງວົງຈອນໂຄງການ ເຊັ່ນ: ໄລຍະການອອກແບບ, ກ່ອນ ແລະ ໃນລະຫວ່າງການກໍ່ສ້າງ, ແລະ ໄລຍະການນຳໃຊ້ພື້ນຖານໂຄງລ່າງ (ເຊັ່ນ: ເຂື່ອນປ້ອງກັນຕາຝັ່ງເຈື່ອນ, ໂຄງລ່າງປ້ອງກັນນໍ້າຖ້ວມ).

## ການປຶກສາຫາລື ແລະ ການເຜີຍແຜ່ຂໍ້ມູນຂ່າວສານ

ໃນໄລຍະການກະກຽມໂຄງການ, ໄດ້ມີການຈັດກອງປະຊຸມປຶກສາຫາລືແຕ່ເດືອນ ພຶດສະພາ ຫາ ກໍລະກົດ 2025 ທັງໃນລະດັບສູນກາງ, ລະດັບເມືອງ ແລະ ລະດັບກຸ່ມບ້ານ/ບ້ານ. ຈຸດປະສົງແມ່ນເພື່ອປຶກສາຫາລືກັບຜູ້ທີ່ມີສ່ວນກ່ຽວຂ້ອງ ແລະ ຜູ້ທີ່ອາດຈະໄດ້ຮັບຜົນກະທົບ ກ່ຽວກັບບັນດາເຄື່ອງມືດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ໄດ້ຖືກຈັດທຳຂຶ້ນສຳລັບໂຄງການ.

ຮ່າງເອກະສານເຄື່ອງມື ESF ຕ່າງໆ ລວມທັງ SEP ຈະຖືກເຜີຍແຜ່ໃນວັນທີ XXX ທັນວາ 2025 ໃນເວັບໄຊທ໌ຂອງກະຊວງໂຍທາທິການ ແລະ ຂົນສົ່ງ (https://www. ) ເພື່ອຮັບຟັງຄຳຄິດເຫັນຈາກສາທາລະນະຊົນ ກ່ອນທີ່ທະນາຄານໂລກຈະເລີ່ມການປະເມີນໂຄງການ. ອີງຕາມຄຳຄິດເຫັນຈາກຜູ້ມີສ່ວນທີ່ກ່ຽວຂ້ອງ, ເອກະສານ ES ຈະຖືກປັບປຸງໃຫ້ສົມບູນ ແລະ ເຜີຍແຜ່ (ສະບັບສົມບູນ) ຜ່ານຊ່ອງທາງດຽວກັນ ເພື່ອແຈ້ງໃຫ້ຜູ້ທີ່ມີສ່ວນທີ່ກ່ຽວຂ້ອງຊາບກ່ຽວກັບສະບັບປັບປຸງໃໝ່.

## ຊັບພະຍາກອນ ແລະ ຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ

ຄະນະຄຸ້ມຄອງໂຄງການ (PMU) ທີ່ກະຊວງການເງິນ ຈະເປັນຜູ້ຮັບຜິດຊອບຫຼັກໃນການຈັດຕັ້ງປະຕິບັດກິດຈະກຳການມີສ່ວນຮ່ວມຂອງຜູ້ມີສ່ວນທີ່ກ່ຽວຂ້ອງ. ຂໍ້ມູນຕິດຕໍ່ຂອງຈຸດປະສານງານດ້ານສິ່ງແວດລ້ອມ ແລະ ສັງຄົມ ຈະຖືກເຜີຍແຜ່ເພື່ອໃຫ້ຜູ້ມີສ່ວນໄດ້ສ່ວນເສຍສາມາດສົ່ງຄຳຄິດເຫັນ ຫຼື ສອບຖາມຂໍ້ມູນກ່ຽວກັບໂຄງການໄດ້. ໃນກໍລະນີທີ່ມີການປ່ຽນແປງບຸກຄະລາກອນດ້ານສິ່ງແວດລ້ອມ ແລະ ສັງຄົມ, ແຜນ SEP ຈະຖືກປັບປຸງໃຫ້ສອດຄ່ອງກັບໂຄງຮ່າງບຸກຄະລາກອນໃໝ່ ແລະ ຈະມີການແຈ້ງໃຫ້ຊາບຜ່ານຊ່ອງທາງເຜີຍແຜ່ຂໍ້ມູນດຽວກັນ.

## ກົນໄກການແກ້ໄຂຄຳຮ້ອງທຸກ (GRM)

ວັດຖຸປະສົງຂອງ GRM ແມ່ນເພື່ອສະໜອງຂັ້ນຕອນການແກ້ໄຂຄຳຮ້ອງທຸກທີ່ສະດວກໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບ ໃນການສະເໜີຂໍ້ກັງວົນ ຫຼື ຄຳຮ້ອງທຸກທີ່ກ່ຽວຂ້ອງກັບໂຄງການ. GRM ຈະກຳນົດວິທີການຍື່ນຄຳຮ້ອງທຸກ, ລວມທັງແບບຟອມ ແລະ ຊ່ອງທາງຕ່າງໆ. ເພື່ອໃຫ້ຂະບວນການແກ້ໄຂມີຄວາມວ່ອງໄວ, ຄຳຮ້ອງທຸກທີ່ໄດ້ຮັບຈະຖືກຢັ້ງຢືນເປັນ

ລາຍລັກອັກສອນ ແລະ ແກ້ໄຂພາຍໃນກອບເວລາທີ່ກຳນົດ. ໃນລະຫວ່າງຂະບວນການແກ້ໄຂ, ຈະມີການປຶກສາຫາລື ກັບຜູ້ຮ້ອງທຸກເພື່ອສ້າງຄວາມເຂົ້າໃຈຮ່ວມກັນ ແລະ ຊອກຫາທາງອອກທີ່ມີປະສິດທິຜົນ.

## ການຕິດຕາມກວດກາ ແລະ ການລາຍງານ

ວັດຖຸປະສົງຂອງການຕິດຕາມກວດກາພາຍໃນແມ່ນເພື່ອຮັບປະກັນວ່າ ກິດຈະກຳຕ່າງໆທີ່ກຳນົດໄວ້ໃນ SEP ໄດ້ຖືກ ຈັດຕັ້ງປະຕິບັດຢ່າງທັນການ ແລະ ເໝາະສົມ. ພາຍໃຕ້ການຊີ້ນຳຂອງຫົວໜ້າໂຄງການ ທີ່ກະຊວງການເງິນ, ໜ່ວຍງານ ຄຸ້ມຄອງອົງປະກອບຂອງໂຄງການ (CMUs) ຈະຮັບຜິດຊອບໃນການຕິດຕາມກວດກາກິດຈະກຳຕ່າງໆ. ໃນໄລຍະຈັດ ຕັ້ງປະຕິບັດ, ຈຸດປະສານງານດ້ານສິ່ງແວດລ້ອມ ແລະ ສັງຄົມ ຈະກະກຽມບົດລາຍງານການຕິດຕາມກວດກາພາຍໃນ ປະຈຳເດືອນ ສຳລັບກິດຈະກຳ SEP.

## ງົບປະມານ ແລະ ຄ່າໃຊ້ຈ່າຍ

ຄ່າໃຊ້ຈ່າຍຄາດຄະເນສຳລັບການຈັດຕັ້ງປະຕິບັດ SEP ໄດ້ຖືກກຳນົດໄວ້ໃນໄລຍະກະກຽມໂຄງການ ເພື່ອແຜນ ງົບປະມານ. ຄ່າໃຊ້ຈ່າຍຕົວຈິງຈະຂຶ້ນກັບຂອບເຂດ ແລະ ກິດຈະກຳທີ່ຈະປະຕິບັດໃນໄລຍະຕໍ່ໄປ. ງົບປະມານອາດຈະຖືກ ປັບປຸງຄືນໃໝ່ເມື່ອລາຍຊື່ໂຄງການຍ່ອຍຖືກສະຫຼຸບຢ່າງເປັນທາງການ. ຄ່າໃຊ້ຈ່າຍໃນການຜະລິດສື່ເຜີຍແຜ່ ແລະ ການ ປຶກສາຫາລືສາທາລະນະ ແມ່ນກວມເອົາໂດຍທຶນສົມທົບ ແລະ ໄດ້ຖືກປະເມີນໄວ້ໃນແຜນ SEP ຂອງໂຄງການ.